ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ**

ຄະນະປະຈຳ

ເລກທີ 204 /ຄປຈ

ນະຄອນຫຼວງວຽງຈັນ, ວັນທີ 12/08/21

# ໜັງສືຢັ້ງຢືນຮັບຊາບ

**ເລື່ອງ : ການຢັ້ງຢືນຮັບຊາບກ່ຽວກັບສົນທິສັນຍາ, ອະນຸສັນຍາ ແລະ ຂໍ້ແນະນຳ ຂອງອົງການແຮງງານ ສາກົນ (ILO).**

- ອີງຕາມ ໜັງສືສະເໜີ ຂອງ ທ່ານລັດຖະມົນຕີກະຊວງແຮງງານສະຫວັດດີການສັງຄົມ, ສະບັບເລກທີ 0742/ຮສສ, ລົງວັນທີ 15 ມີນາ 2021;
- ອີງຕາມ ທຳມະນູນຂອງອົງການແຮງງານສາກົນ ມາດຕາ 19, ວັກ 5 ແລະ 6;
- ອີງຕາມ ມາດຕາ 33 ສິດ ແລະ ໜ້າທີ່ຂອງຄະນະປະຈຳສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ), ສະບັບເລກທີ 215/ສພຊ, ລົງວັນທີ 16 ທັນວາ 2015.

ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຢັ້ງຢືນຮັບຊາບ ກ່ຽວກັບ ສົນທິສັນຍາ, ອານຸສັນຍາ ແລະ ຂໍ້ແນະນຳ ຂອງອົງການແຮງງານສາກົນ (ILO) ຈຳນວນ 5 ສະບັບດັ່ງນີ້:

1. ສົນທິສັນຍາ ເລກທີ 190 ແລະ ຂໍ້ແນະນຳເລກທີ 206 ວ່າດ້ວຍຄວາມຮຸນແຮງ ແລະ ການຄຸກຄາມ ປີ 2019;
2. ອານຸສັນຍາເລກທີ 81 ປີ 1995 ຕໍ່ກັບສົນທິສັນຍາວ່າດ້ວຍການກວດກາແຮງງານ ປີ 1947;
3. ຂໍ້ແນະນຳເລກທີ 202 ວ່າດ້ວຍການປົກປ້ອງສັງຄົມຂັ້ນພື້ນຖານປີ 2012;
4. ຂໍ້ແນະນຳເລກທີ 204 ວ່າດ້ວຍການຫັນປ່ຽນເສດຖະກິດນອກລະບົບ ໄປສູ່ເສດຖະກິດໃນລະບົບ, ປີ 2015;
5. ຂໍ້ແນະນຳເລກທີ 205 ວ່າດ້ວຍການຈ້າງງານ ແລະ ວຽກທີ່ເປັນທຳເພື່ອສັນຕິພາບ ແລະ ຄວາມເຂັ້ມແຂງ ປີ 2017.

ເພື່ອປະຕິບັດຕາມພັນທະ ທີ່ ສປປ ລາວ ເປັນພາຄີ ຂອງອົງການແຮງງານສາກົນ ຄະນະປະຈຳສະພາແຫ່ງຊາດ ແຫ່ງ ສປປ ລາວ ຈຶ່ງໄດ້ຢັ້ງຢືນຮັບຊາບ ຕໍ່ບັນດາເອກະສານທີ່ໄດ້ກ່າວມາຂ້າງເທິງນັ້ນ.

ຄະນະປະຈຳສະພາແຫ່ງຊາດ

ປະທານ

**ປອ ໄຊສົມພອນ ພົມວິຫານ**